**ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ**
ບ້ານສະພັງໝໍ້, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
https://www.facebook.com/Deknoylaoalc/

# ລາຍການປື້ມສຳລັບຂາຍຂອງ ALC

10. 2024

## ◆ ຮຽນພາສາລາວ

| ລຳດັບ | ຊື່ປື້ມ | ຮູບປົກປື້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ຮຽບຮຽງ | ຜູ້ແຕ້ມ/ຮູບປະກອບ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 1 | ໂຕຫຍັງແດ່ ເຫຼັ້ມ 1 |  | ພິມຄັ້ງທີ 1: 1997<br>ພິມຄັ້ງທີ່ 7: 2022 | ດວງເດືອນ ບຸນຍາວົງ | ແກ້ວ ໄຊຍະວົງ, ໂສພາ ອິນທະວົງສາ, ທອງມີ ພົນດວງສີ, ບົວວັນ ສີດາລາ, ບຸນ ເລີດ ສີວິໄຊ, ບຸນທັນ ສົມພານດີ, ບຸນມີ ດວງປີຊາວົງ | ເປັນປື້ມກາບກອນແບບງ່າຍໆ ທີ່ພັນລະນາເຖິງ ບຸກຄະລິກ, ຮູບຮ່າງ ແລະ ສຽງ ຂອງສັດ ຕາມພະຍັນຊະນະຂອງລາວ ໂດຍທີ່ບໍ່ໄດ້ບອກຊື່ຂອງສັດນັ້ນ. ເດັກນ້ອຍສາມາດສະໜຸກສະໜານກັບການຮຽນຮູ້ພາສາລາວໄດ້ຈາກການອ່ານ ແລະ ໄດ້ຟັງກາບກອນທີ່ມ່ວນ. | 24,000 | ອະນຸບານ-ປະຖົມ |
| 2 | ໂຕຫຍັງແດ່ ເຫຼັ້ມ 2 |  | ພິມຄັ້ງທີ 1: 1997<br>ພິມຄັ້ງທີ່ 7: 2022 | ດວງເດືອນ ບຸນຍາວົງ | ແກ້ວ ໄຊຍະວົງ, ໂສພາ ອິນທະວົງສາ, ທອງມີ ພົນດວງສີ, ບົວວັນ ສີດາລາ, ບຸນ ເລີດ ສີວິໄຊ, ບຸນທັນ ສົມພານດີ, ບຸນມີ ດວງປີຊາວົງ | ເປັນປື້ມກາບກອນແບບງ່າຍໆ ທີ່ພັນລະນາເຖິງ ບຸກຄະລິກ, ຮູບຮ່າງ, ແລະ ສຽງ ຂອງສັດຕາມພະຍັນຊະນະຂອງລາວ ໂດຍທີ່ບໍ່ໄດ້ບອກຊື່ຂອງສັດນັ້ນ. ເດັກນ້ອຍສາມາດສະໜຸກສະໜານກັບການຮຽນຮູ້ພາສາລາວໄດ້ຈາກການອ່ານ ແລະ ໄດ້ຟັງກາບກອນທີ່ມ່ວນ. ເປັນເຫຼັ້ມທີ 2 ຕໍ່ຈາກເຫຼັ້ມທີ 1. | 24,000 | ອະນຸບານ-ປະຖົມ |
| 3 | ດາວຍິບຍັບ<br>ໂຕຫຍັງແດ່ ເຫຼັ້ມ 3 |  | ພິມຄັ້ງທີ 1: 2000<br>ພິມຄັ້ງທີ່ 3: 2022 | ດວງເດືອນ ບຸນຍາວົງ | ດວງໃຈ ແປງມະນີວົງ, ວິໄລກອນ, ທົງສາ ໂຄດສຸວັນ, ສີຈັນ ສຸຂະພົນ, ອານຸພາບ ຂາວພັນ, ກອງແສງ ຈັນທະບູຣີ, ມະຍຸຣາ, ຊິກໂກ້, ເຜີດທະພອນ | ເປັນປື້ມທີ່ຕໍ່ຈາກເຫຼັ້ມ I ແລະ II. ປະກອບດ້ວຍບົດກາບກອນ ແລະ ພາບປະກອບຕ່າງໆ ທີ່ນຳສະເໜີວັດທະນະທຳ ແລະ ຄວາມເປັນລາວ. ເດັກນ້ອຍສາມາດຮຽນພາສາລາວໄດ້ຕາມທຳມະຊາດ ໃນຂະນະທີ່ອ່ານບົດກາບກອນ ແລະ ເບິ່ງຮູບ. | 24,000 | ອະນຸບານ-ປະຖົມ |
| 4 | ນັບໝາກໄມ້ 1. 2. 3. |  | ພິມຄັ້ງທີ 1: 1996<br>ພິມຄັ້ງທີ່ 2: 2022 | | ມະນີວອນ ອາດພາສຸກ | ຊຸດດຽວກັນກັບ "ໂຕຫຍັງແດ່? ເຫຼັ້ມ 1-3". ໝາກໄມ້ຊະນິດຕ່າງໆ ທີ່ຮູ້ຈັກກັນດີໃນປະເທດລາວ ປາກົດຢູ່ໃນໜ້າຕໍ່ໄປ ໃນແຕ່ລະຕົວເລກ. ມັນເປັນປື້ມທີ່ດີທີ່ສຸດສຳລັບເດັກນ້ອຍທີ່ເລີ່ມຮຽນພາສາແລະຕົວເລກ. | 21,000 | ອະນຸບານ-ປະຖົມ |
| 5 | ກາບກອນສອນຄຳ |  | ພິມຄັ້ງທີ 1: 2008<br>ພິມຄັ້ງທີ່ 3: 2017<br>ພິມຄັ້ງທີ່ 5: 2024 | ມະຫາ ສີລາ ວີຣະວົງສ໌ | ວົງສະຫວັນ ດຳລົງສຸກ | ເປັນປື້ມອ່ານເສີມທີ່ເໝາະສົມສຳລັບນັກຮຽນໃນຊັ້ນປະຖົມ, ເດັກນ້ອຍສາມາດເຝິກຂຽນ ເຝິກອ່ານ ສະຫຼະ, ພະຍັນຊະນະໃນພາສາລາວ ແລະ ເຊັ່ງກາບກອນໃນປື້ມ ເຮັດໃຫ້ເຂົ້າໃຈ ແລະ ຈື່ຈຳໄດ້ດີ. | 44,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ<br>ຄູປະຖົມ,<br>ຄູມັດທະຍົມຕົ້ນ |
| 6 | ນີ້ແມ່ນ ເຮືອນ ທີ່ ແຈັກປຸກໄວ້<br>(ລະຄອນເຈ້ຍ ນ້ອຍ) |  | ພິມຄັ້ງທີ 1 (ໃຫຍ່)<br>: 2009<br>ພິມຄັ້ງທີ່ 2 (ນ້ອຍ)<br>: 2009<br>ພິມຄັ້ງທີ່ 3 (ໃຫຍ່)<br>: 2023 | ເນື້ອໃນຕົ້ນສະບັບ: ກອນຂອງ "ແມ່ຫ່ານ"<br>ແປແລະແຕ່ງເປັນກາບພາສາລາວໂດຍ: ດວງເດືອນ ບຸນຍາວົງ | ຢາເບະ ມິດຊິໂນລິ | ເປັນນິທານຂະໜາດນ້ອຍ ເປັນເລື່ອງລາວເກົ່າແກ່ຊື່ວ່າ "ແມ່ຫ່ານ" ຈາກປະເທດອັງກິດ. ເຈົ້າສາມາດຮຽນພາສາລາວໄດ້ໃນຂະນະທີ່ກຳລັງມ່ວນຊື່ນກັບກິດຈະກຳ ພາບປະກອບຂອງຕົວລະຄອນເລື່ອງນີ້ສາມາດນຳໄປໃຊ້ເປັນບັດໄປສະນີໄດ້. | 12,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ<br>ຄູປະຖົມ |

## ◆ ນິທານຕ່າງປະເທດ

| ລຳດັບ | ຊື່ປຶ້ມ | ຮູບປົກປຶ້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ຮຽບຮຽງ | ຜູ້ແຕ້ມ/ຮູບປະກອບ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 7 | ຫົວຜັກກາດໃຫຍ່ |  | ພິມຄັ້ງທີ 1: 2020 | ເລົ່າເລື່ອງໂດຍ:<br>ເອ. ໂຕລສະຕອຍ<br>ແປເປັນພາສາຍີ່ປຸ່ນໂດຍ:<br>ຣິສາໂກະ ອຸຈິດະ<br>ແປຈາກພາສາຍີ່ປຸ່ນເປັນພາສາລາວໂດຍ:<br>ຈັນທະສອນ ອິນທະວົງ | ຈູລຽວ ຊະໂຕ | ເປັນນິທານພື້ນເມືອງເກົ່າແກ່ຂອງຣັດເຊຍ ເຊິ່ງແຕ້ມໂດຍນັກແຕ້ມຍີ່ປຸ່ນ ເປັນນິທານທີ່ມີຊື່ສຽງໂດ່ງດັງ ແລະ ໄດ້ຮັບຄວາມນິຍົມຊົມຊອບຈາກເດັກນ້ອຍທົ່ວໂລກ,ຖືກຈັດພິມຫຼາຍກວ່າ 7 ພາສາ. ຕະຫຼອດໄລຍະເວລາຫຼາຍກວ່າ 50 ປີທີ່ຜ່ານມາ. ເປັນເລື່ອງກ່ຽວກັບພໍ່ເຖົ້າຄົນໜຶ່ງທີ່ປູກຫົວຜັກກາດໄວ້ ແລ້ວຫົວຜັກກາດກໍ່ໃຫຍ່ຂຶ້ນຫຼາຍ ຈົນບໍ່ສາມາດຫຼົກເອົາຫົວຜັກກາດອອກມາໄດ້, ນິທານໄດ້ສະແດງໃຫ້ເຫັນເຖິງພະລັງຂອງຄວາມສາມັກຄີ ລະຫວ່າງ ຜູ່ໃຫຍ່, ເດັກນ້ອຍ ແລະ ສັດລ້ຽງ. | 41,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ |

## ◆ ນິທານພື້ນເມືອງ ແລະ ນິທານຊົນເຜົ່າ

| ລຳດັບ | ຊື່ປຶ້ມ | ຮູບປົກປຶ້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ຮຽບຮຽງ | ຜູ້ແຕ້ມ/ຮູບປະກອບ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 8 | ກ່ຳພ້າກັບຜີນ້ອຍ |  | (ພິມຄັ້ງທີ 1: 1990)<br>ສະບັບປັບປຸງ: 2003<br>ພິມຄັ້ງທີ 11: 2024 | ດວງເດືອນ ບຸນຍາວົງ | ວົງສະຫວັນ ດຳລົງສຸກ | ເປັນນິທານພື້ນເມືອງຂອງລາວ ທີ່ມີຊື່ສຽງ ແລະ ໄດ້ຮັບຄວາມນິຍົມຫຼາຍຈາກເດັກນ້ອຍລາວ. ເປັນເລື່ອງຂອງທ້າວກ່ຳພ້າທີ່ຕ້ອງໄປດຳລົງຊີວິດຢູ່ໃນປ່າຄົນດຽວ ແລະ ປະສົບຄວາມຫຍຸ້ງຍາກຫລາຍອັນ. ແຕ່ກໍ່ໂຊກດີ ທີ່ໄດ້ພົບ ແລະ ເປັນເພື່ອນກັບຜີນ້ອຍ ແລະ ສັດຕ່າງໆ ເຮັດໃຫ້ຊີວິດຂອງທ້າວກ່ຳພ້າປ່ຽນແປງ ແລະ ດີຂຶ້ນ. | 33,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |
| 9 | ກ່ຳພ້າກັບນາງງາ |  | (ພິມຄັ້ງທີ 1: 1990)<br>ສະບັບປັບປຸງ: 2003<br>ພິມຄັ້ງທີ 10: 2024 | ດວງເດືອນ ບຸນຍາວົງ | ວົງສະຫວັນ ດຳລົງສຸກ | ເປັນເລື່ອງທີ່ຕໍ່ຈາກກ່ຳພ້າກັບຜີນ້ອຍ ເປັນໄລຍະທີ່ທ້າວກ່ຳພ້າໄດ້ເຕີບໃຫຍ່ ແລະ ໄດ້ສ້າງຄອບຄົວກັບນາງງາ ແຕ່ຊີວິດກໍຍັງພົບກັບອຸປະສັກອີກ. ຍ້ອນພະຍາພະຍາຍາມທີ່ຈະເອົານາງງາມາເປັນເມຍຂອງຕົນ ແຕ່ກ່ຳພ້າກໍ່ເອົາຊະນະພະຍາໄດ້ດ້ວຍຄວາມຊ່ວຍເຫຼືອຈາກເວດມົນຂອງນາງງາ. | 33,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |
| 10 | ໂຕຣົ່ວ |  | ພິມຄັ້ງທີ 1: 1999<br>ພິມຄັ້ງທີ 2: 2019 | ອ.ໂອ | ກອງແລ ນະ ອິງຮັງ | ເປັນເລື່ອງຂອງສອງຜົວເມຍ ທີ່ອອກໄປກະກຽມເຮັດນາ ໃນລະດູຝົນ ແລະ ຕ້ອງອາໄສຢູ່ຖຽງນາ ເຊິ່ງຍັງສ້ອມແປງຫຼັງຄາບໍ່ທັນແລ້ວ . ພວກເຂົາລົມກັນວ່າ ຖ້າຄືນນີ້ຝົນຕົກ ເຂົາຢ້ານຮົ່ວ. ໃນເວລານັ້ນມີເສືອໂຕໜຶ່ງກຳລັງຈະມາຈອບຄຸບເອົາສັດລ້ຽງຂອງພວກເຂົາໄປກິນ. ເມື່ອໄດ້ຍິນຄົນເວົ້າແນວນັ້ນ ມັນຈຶ່ງຕົກໃຈ ແລະ ຢ້ານໂຕຮົ່ວຢ່າງສຸດຂີດ. | 18,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |

## ◆ ນິທານອື່ນໆ

| ລຳດັບ | ຊື່ປຶ້ມ | ຮູບປົກປຶ້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ຮຽບຮຽງ | ຜູ້ແຕ້ມ/ຮູບປະກອບ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 11 | ຂ້ອຍຈະໄປໃສນໍ |  | ພິມຄັ້ງທີ 1: 2004<br>ພິມຄັ້ງທີ 2: 2011<br>ພິມຄັ້ງທີ 3: 2022 | ທ. ໂມຣິ ໂທຣິ | ທ. ຢາເບະ ມິດຊືໂນຣິ | ເປັນເລື່ອງທີ່ເວົ້າເຖິງການຮັກສາສິ່ງແວດລ້ອມ ໂດຍປຽບທຽບຄຸນປະໂຫຍດໃນການນຳໃຊ້ໃບຕອງກ້ວຍ ແລະ ຖົງຢາງພາສຕິກ ເມື່ອເຮົາໃຊ້ພາສຕິກ ແລ້ວຖິ້ມຊະຊາຍມັນກໍ່ຈະໄປຕົກຄ້າງເປັນຂີ້ເຫຍື້ອທີ່ຮົກເຮື້ອ ແລະ ບໍ່ຍ່ອຍສະຫຼາຍຄືກັບໃບຕອງກ້ວຍ. | 42,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ |
| 12 | ກາບກອນ ຈາກ ອັດຕະປື |  | ພິມຄັ້ງທີ 1: 2021 | ສຸລິວົງ ພອນວັນນາ | ນັກຮຽນ ມັດທະຍົມສົມບູນ ສະໜາມໄຊ | ແຕ່ງຂຶ້ນໂດຍຄູແລະ ແຕ້ມຮູບໂດຍນັກຮຽນຂອງ ມສ ສະໜາມໄຊ, ເມືອງ ສະໜາມໄຊ, ແຂວງ ອັດຕະປື. ເຊິ່ງບາງຄົນໄດ້ຮັບຜົນກະທົບຈາກໄພພິບັດ ໃນປີ 2018. ປັນປຶ້ມຮູບພາບທີ່ອະທິບາຍເຖິງເຫດການ ຄູກັ້ນນ້ຳຂອງເຂື່ອນເຊປຽນ-ເຊນ້ຳນ້ອຍແຕກ ແລະ ຄວາມຮູ້ສຶກຕໍ່ກັບສະພາບບ້ານເກີດເມືອງນອນຂອງພວກເຂົາ.ສາມາດນຳໃຊ້ເຂົ້າໃນການສຶກສາ ເພື່ອກຽມຄວາມພ້ອມໃນການປ້ອງກັນໄພພິບັດ. | 27,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |
| 13 | ຍັກຫົວປຸ້ງ |  | ພິມຄັ້ງທີ 1: 2012<br>ພິມຄັ້ງທີ 2: 2023 | ອຳພັນທອງ ເພັດບຸນພອນ | | ເປັນເລື່ອງກ່ຽວກັບຍັກທີ່ອອກມາຫາກິນເດັກນ້ອຍທີ່ມັກນອນເດິກ, ຖ້າຍັກກິນເດັກນ້ອຍໄດ້ຮອດ 100 ຄົນ ຍັກກໍຈະມີພະລັງ ສາມາດອອກມາຕອນກາງເວັນໄດ້. ເລື່ອງນີ້ສ້າງຂຶ້ນຈາກການຝຶກອົບຮົມນັກຂຽນ-ນັກແຕ້ມ. ຮູບຂອງເລື່ອງນີ້ແມ່ນມາຈາກເຈ້ຍທີ່ໃຊ້ມືຈີກແລ້ວຕິດຕໍ່ກັນເປັນຮູບ ເບິ່ງແລ້ວເປັນໜ້າສົນໃຈ. | 25,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ |

## ◆ ຄວາມຮູ້ທົ່ວໄປ

| ລຳດັບ | ຊື່ປຶ້ມ | ຮູບປົກປຶ້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ແຕ້ມ | ຜູ້ແຕ່ງ/ຜູ້ແຕ້ມ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 14 | ບຸນບ້ານຂ້ອຍ |  | ພິມຄັ້ງທີ1: 2016 | ນາງ ລັດຕະນະພອນ ແກ້ວມະນີຖັນ, ທ້າວ ພູຜ່ານ ແກ້ວວິຈິດ,<br>ນາງ ນວນນຽນ ໂດຍວິໄລ, ນາງ ບຸນຖະໜອມ ແກ້ວມະນີຖັນ,<br>ທ້າວ ຄຳພະແກ້ວ ອິນທະວົງ, ທ້າວ ບຸນອ້ອຍ ແສງອາລຸນ,<br>ລູກຊາວນາ ທ້າວ ໄຊສະຫວັດ ທິບສະດີ, ນາງ ວິໄລສອນ,<br>ນາງ ບົວລາວັນ ອິດທິພົນ, ທ້າວ ຕົວ ເລົ່າ,<br>ນາງ ພວງວອນ ວິໄລຄຳ, ທ້າວ ໂຊຍຸດ ດາວວິຈິດ | | ເປັນປຶ້ມທີ່ຮັບໂຮມກ່ຽວກັບງານບຸນປະເພນີຕ່າງໆຂອງຫຼາຍຊົນເຜົ່າ ເຊັ່ນ : ຕາລ່ຽງ, ໄທດຳ, ມົ້ງ, ກຶມມຸ ແລະ ອື່ນໆ ຈາກແຂວງ ຫົວພັນ, ຊຽງຂວາງ, ຄຳມ່ວນ ແລະ ອີກຫຼາຍໆແຂວງໃນລາວ ເຊິ່ງສະທ້ອນໃຫ້ເຫັນຄວາມຫຼາກຫຼາຍທາງດ້ານວັດທະນະທຳ, ຄວາມເຊື່ອ ແລະ ພິທີກຳຕ່າງໆຂອງແຕ່ລະຊົນເຜົ່າ. | 18,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |
| 15 | ອາຫານບ້ານເຮົາ |  | ພິມຄັ້ງທີ 1: 2016<br>ພິມຄັ້ງທີ 2: 2020 | ທ້າວ ຄຳພະແກ້ວ ອິນທະວົງ, ທ້າວ ຄຳໄຕ ຜາຍພະຈັນ,<br>ນາງ ບຸນຖະໜອມ ແກ້ວມະນີຖັນ, ນາງ ລັດຕະນະພອນ ແກ້ວມະນີຖັນ | | ເປັນປຶ້ມທີ່ບອກວິທີການເຮັດອາຫານແບບທ້ອງຖິ່ນຂອງແຂວງ ຫົວພັນ, ຄຳມ່ວນ ແລະ ເຊກອງ. ສູດອາຫານທີ່ແນະນຳທັງໝົດມີ 22 ສູດ. ເຊິ່ງທັງໝົດແມ່ນມີເອກະລັກສະເພາະ, ມີຄວາມແຊບຊ້ອຍ, ທຸກຄົນສາມາດເອົາໄປເຮັດກິນເອງໄດ້ ແລະ ຍັງເຮັດໃຫ້ພວກເຮົາຮູ້ຈັກຄວາມຫຼາກຫຼາຍຂອງອາຫານພື້ນເມືອງລາວ. | 32,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |
| 16 | ແມງໄມ້ໃກ້ເຮືອນ |  | ພິມຄັ້ງທີ 1: 2013<br>ພິມຄັ້ງທີ 2: 2020 | ສຸກພັນສາ ພູຜາສຸກ | | ປຶ້ມນີ້ແມ່ນສ້າງມາຈາກຄວາມປາຖະໜາຂອງເດັກນ້ອຍທີ່ສົນໃຈກັບແມງໄມ້ຕ່າງໆທີ່ເຂົາຄຸ້ນເຄີຍ ແລະ ພວກເຂົາມີໂອກາດ ໄດ້ຄົ້ນຄິດກ່ຽວກັບຄວາມຫຼາກຫຼາຍຂອງຊີວະນາໆພັນ. ໃນປຶ້ມຫົວນີ້ມີການແນະນຳ ແລະ ອະທິບາຍ ກ່ຽວກັບນິໄສ, ການປ່ຽນແປງ, ວົງຈອນຊີວິດແລະ ອາຫານຂອງແມງໄມ້ 20 ຊະນິດ ເຊັ່ນ: ມົດ, ແມງກະເບື້ອ, ແມງເງົາ. | 27,000 | ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ ຜູ້ໃຫຍ່ |

◆ ຄູ່ມື

| ລຳດັບ | ຊື່ປື້ມ | ຮູບປົກປື້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ຮຽບຮຽງ | ຜູ້ແຕ້ມ/ຮູບປະກອບ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 17 | ຄູ່ມືຫ້ອງຮັກອ່ານ |  | ພິມຄັ້ງທີ 1: 2012<br>ພິມຄັ້ງທີ 2: 2018 | ດາຣາ ກັນລະຍາ,<br>ສຸກພັນສາ ພູພາສຸກ,<br>ສຸລະພີ ວິຣະວົງ | ແສງສຸລີ, ສະມິດາ, ວິຣະວົງ ແລະ ALC | ເປັນປື້ມຄູ່ມືທີ່ແນະນຳວິທີການ ບໍລິຫານ ແລະ ການນຳໃຊ້ຫ້ອງສະໝຸດ ຮວມໄປເຖິງ ການເຮັດກິດຈະກຳ ເພື່ອສົ່ງເສີມການອ່ານ ແລະ ການນຳໃຊ້ປື້ມ ເຊິ່ງເໝາະສົມສຳລັບ ຄູຜູ້ຮັບຜິດຊອບຫ້ອງສະໝຸດ ແລະ ຜູ້ທີ່ສົນໃຈໃນວຽກງານດ້ານນີ້. | 42,000 | ຄູປະຖົມ,<br>ຄູມັດທະຍົມຕົ້ນ-ປາຍ,<br>ບັນນາຮັກ,<br>ມະຫາວິທະຍາໄລ ແລະ<br>ຜູ້ໃຫຍ່ |
| 18 | ພັບເຈ້ຍກັບໝີປຸ້ຍ |  | ພິມຄັ້ງທີ 1: 2014<br>ພິມຄັ້ງທີ 2: 2018 | ອຳພາພອນ ລັດທະຍອດ | | ເປັນປື້ມຄູ່ມືສຳລັບຄູ ພໍ່ ແມ່ ທີ່ສົນໃຈວິທີພັບເຈ້ຍ ເພື່ອເສີມສ້າງ ພັດທະນາການ ທັກສະ ແລະ ແລະຈິນຕະນາການ ໃຫ້ແກ່ເດັກນ້ອຍ. | 35,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ມະຫາວິທະຍາໄລ ແລະ<br>ຜູ້ໃຫຍ່ |

◆ ລະຄອນເຈ້ຍ

| ລຳດັບ | ຊື່ປື້ມ | ຮູບປົກປື້ມ | ປີຈັດພິມ | ຜູ້ແຕ່ງ/ຜູ້ຮຽບຮຽງ | ຜູ້ແຕ້ມ/ຮູບປະກອບ | ເນື້ອໃນຫຍໍ້ | ລາຄາຂາຍສົ່ງ (LAK) | ກຸ່ມເປົ້າໝາຍ |
|---|---|---|---|---|---|---|---|---|
| 19 | ລະຄອນເຈ້ຍ ຢາກໄດ້ປູມເປົ້າ |  | (ພິມຄັ້ງທີ 1: 1993)<br>ສະບັບປັບປຸງ: 2012<br>ພິມຄັ້ງທີ 3: 2017 | ຍານນະວຸດທິ ຈັນທະລັງສີ | ແສງສຸລີ ກັດຕິຍະສັກ | ເປັນເລື່ອງຂອງເດັກນ້ອຍທີ່ຢາກໄດ້ໃນສິ່ງທີ່ຕ້ອງການ ແຕ່ກໍຕ້ອງໄດ້ອົດທົນ ແລະ ລໍຄອຍ. ເປັນເລື່ອງທີ່ແຕ້ມຂຶ້ນໃໝ່ແລະໄດ້ຈັດພິມຄືນເປັນຄັ້ງທີ 2 ຕໍ່ຈາກການຈັດພິມຄັ້ງທຳອິດໃນປີ 1993 ໂດຍການສະໜັບສະໜູນຈາກ ສູນວັດທະນະທຳອາຊີ-ປາຊີຟິກ ຂອງ ຢູແນສໂກ (ACCU) . | 53,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ<br>ຄູປະຖົມ,<br>ຄູມັດທະຍົມຕົ້ນ |
| 20 | ລະຄອນເຈ້ຍ ຮູຂອງໃຜ |  | ພິມຄັ້ງທີ 1: 2004<br>ພິມຄັ້ງທີ 2: 2017 | ນາງ ຄອນສະຫວັນ ສີຈັນທອງທິບ | | ເປັນເລື່ອງທີ່ເວົ້າເຖິງການຜິດຖຽງ ແລະ ຍາດແຍ່ງ ເພື່ອຄອບຄອງທີ່ຢູ່ ລະຫວ່າງ ກະປູນ້ອຍ ແລະ ງູ.<br>ເປັນຜົນງານທີ່ໄດ້ຮັບຮາງວັນທີ 1 ໃນການແຂ່ງຂັນ ລະຄອນເຈ້ຍ (ຄາມິຊິບາຍ) ປີ 2003. | 53,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ຄູປະຖົມ,<br>ຄູມັດທະຍົມຕົ້ນ-ປາຍ |
| 21 | ລະຄອນເຈ້ຍ ຊ່ວຍເຫຼືອກັນ |  | ພິມຄັ້ງທີ 1(ຍີ່ປຸ່ນ): 1998<br>ພິມຄັ້ງທີ 2(ລາວ): 2018 | ທ້າວ ບຸນເລີດ ສີວິໄຊ | | ເປັນເລື່ອງທີ່ເວົ້າເຖິງຄວາມມີນ້ຳໃຈ ແລະ ມິດຕະພາບລະຫວ່າງ ມົດ ແລະ ປາ ໃນເວລາເກີດໄພພິບັດທາງທຳມະຊາດ. ເປັນຜົນງານທີ່ຖືກສ້າງຂຶ້ນໃນປີ 1997 ຈາກການ " ສຳມະນາ ຄາມິຊິບາຍ " ເຊິ່ງຈັດຂຶ້ນໃນນະຄອນຫຼວງວຽງຈັນ ໂດຍມີຊ່ຽວຊານຈາກປະເທດຍີ່ປຸ່ນເຂົ້າຮ່ວມນຳ. | 50,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ-ປາຍ,<br>ຄູປະຖົມ,<br>ຄູມັດທະຍົມຕົ້ນ-ປາຍ |
| 22 | ລະຄອນເຈ້ຍ<br>ນີ້ແມ່ນ ເຮືອນ ທີ່ ແຈັກປຸກໄວ້ |  | ພິມຄັ້ງທີ 1 (ໃຫຍ່) : 2009<br>ພິມຄັ້ງທີ 2 (ນ້ອຍ) : 2009<br>ພິມຄັ້ງທີ 3 (ໃຫຍ່) : 2023 | ເນື້ອໃນຕົ້ນສະບັບ: ກອນຂອງ "ແມ່ທ່ານ" ແປແລະແຕ່ງເປັນພາສາລາວໂດຍ: ດວງເດືອນ ບຸນຍາວົງ | ຢາເບະ ມິດຊິໂນລິ | ອີງຕາມບົດກອນພື້ນເມືອງ" ແມ່ທ່ານ "ທີ່ສືບທອດກັນມາແຕ່ດົນນານໃນປະເທດອັງກິດ, ເນື້ອໃນຂອງເລື່ອງເປັນເກມຄຳສັບທີ່ເປັນຈັງຫວະ ເປັນບົດກອນທີ່ຕໍ່ກັນເປັນປະໂຫຍກ ເຮັດໃຫ້ເຮົາສາມາດຮຽນຮູ້ພາສາລາວໄດ້ໃນຂະນະທີ່ກຳລັງມ່ວນຊື່ນກັບການເລົ່າເລື່ອງນີ້. | 90,000 | ອະນຸບານ-ປະຖົມ,<br>ມັດທະຍົມຕົ້ນ<br>ຄູປະຖົມ,<br>ຄູມັດທະຍົມຕົ້ນ |

ລາຄາຂາຍສົ່ງແມ່ນລາຄາທີ່ລູກຄ້າຊື້ຈາກຫ້ອງການ ALC (ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ) ໂດຍກົງ. ແຕ່ຈະມີຄ່າຂົນສົ່ງເພີ່ມເຕີມ.

ຖ້າທ່ານໃດສົນໃຈປື້ມເຫຼົ່ານີ້ ກະລຸນາຕິດຕໍ່ພວກເຮົາໄດ້ ຕາມທີ່ຢູ່ຕໍ່ໄປນີ້.

**ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ຫ້ອງການນະຄອນຫຼວງວຽງຈັນ** **Tel:** 021 416064 **Moble:** 030 9012107 **Email:** alclao@laotel.com